## ກະຊວງກະສິກຳ ແລະ ປ່າໄມ້

## ສະຖາບັນຄົ້ນຄ້ວາກະສິກຳ ແລະ ປ່າໄມ້

# ບົດລາຍງານວິຊາການ

# ການທົດລອງປູກຂີ້ງດຳ*(Boesenbergia spp)*ແບບປະສົມປະສານກັບພືດກະສິກຳ ທີ່ບ້ານ ທ່າໂພ ແລະ ບ້ານຫ້ວຍມະຫາ ເມືອງ ໂພນໄຊ, ແຂວງ ຫຼວງພະບາງ

ໂດຍ: ບັນຊາ ທຳມະວົງ, ສົງກອນ ໄຊຍະລາດ

ໂຄງການຍ່ອຍຄົ້ນຄ້ວາປ່າໄມ້

ໂຄງການຄົ້ນຄ້ວາກະສິກຳ ແລະ ປ່າໄມ້ເຂດພູດອຍຮ່ວມມື ລາວ-ຊູແອດ

(ມັງກອນ, 2007)

## ສາລະບານ


| | | |
|---|---|---|
| | ບົດຄັດຫຍໍ້ | 4 |
| I. | ຄວາມເປັນມາ | 5 |
| II. | ຄຸນລັກສະນະຂອງຊີງດຳ | 5 |
| III. | ຈຸດປະສົງ | 5 |
| IV. | ວິທີການຈັດຕັ້ງປະຕິບັດ | 6 |
| | 1. ການຈັດຕັ້ງປະຕິບັດ | 6 |
| | 2. ສະຖານທີ່ | 6 |
| | 3. ສະພາບເນື້ອທີ່ | 6 |
| | 4. ເຕັກນິກ ແລະ ວິທີການ | 6 |
| V. | ຈຳນວນຜູ້ເຂົ້າຮ່ວມ | 7 |
| VI. | ການເກັບຂໍ້ມູນ | 7 |
| VII. | ຜົນໄດ້ຮັບ | 8 |
| VIII. | ການວິເຄາະ | 10 |
| IX. | ການສົນທະນາ | 10 |
| X. | ສະຫຼຸບ | 10 |
| XI. | ຂໍ້ສະເໜີ | 11 |

# ສາລະບານຕາຕະລາງ

ຕາຕະລາງ1: ການສະເລ່ຍນ້ຳໜັກລວມຊີ້ງດຳຂອງແຕ່ລະຄອບຄົວ 8
ຕາຕະລາງ2: ການຄິດໄລ່ຄ່າແຮງງານ 9
ຕາຕະລາງ3: ລາຍຈ່າຍແລະລາຍຮັບແຕ່ລະຄອບຄົວ 9

# ສາລະບານຮູບສະແດງ


ຮູບ1: ຮູບແບບການປູກຂີງດຳສອງວິທີປະສົມປະສານກັບພືດກະສິກຳ 7

ຮູບ2: ຮູບສະແດງຜົນຜະລິດຂອງຂີງດຳແຕ່ລະຄອບຄົວ 8

ຮູບ3: ຮູບສະແດງການສົມທຽບລາຍຈ່າຍ ແລະ ລາຍຮັບແຕ່ລະຄອບຄົວ 9

# ບົດຄັດຫຍໍ້

ກິດຈະກຳປູກຂີງດຳຮ່ວມກັບປະຊາຊົນ ທີ່ເມືອງໂພນໄຊ, ແຂວງຫຼວງພະບາງແມ່ນກິດຈະກຳໜຶ່ງຂອງໂຄງການຍ່ອຍຄົ້ນຄ້ວາປ່າໄມ້. ເຂົ້າຮ່ວມກິດຈະກຳນີ້ມີ 2 ບ້ານ ແລະ 5 ຄອບຄົວຄື: ບ້ານທ່າໂພ ມີ 3 ຄອບຄົວ ແລະ ບ້ານຫ້ວຍມະຫາ ມີ 2 ຄອບຄົວ. ກິດຈະກຳດັ່ງກ່າວໄດ້ປະຕິບັດເປັນເວລາ 7 ເດືອນ ເຊິ່ງໄດ້ເລີ່ມລົງມືປູກແຕ່ ວັນທີ 14/6/04 -18/1/05 ແມ່ນໄດ້ເກັບກູ້ຜົນຜະລິດຕາມລະດູການ. ຈຸດປະສົງຂອງກິດຈະກຳແມ່ນເພື່ອຍົກສະມັດຕະພາບຮັບປະກັນການມີຢູ່ມີກິນ, ສ້າງລາຍຮັບເສີມໃຫ້ແກ່ຄອບຄົວ, ຊ່ວຍຫຼຸດຜ່ອນຄວາມທຸກຍາກ, ຍຸດຕິການຖາງປ່າເຮັດໄຮ່ແບບເລື່ອນລອຍ ແລະ ຊຸກຍູ້ວຽກງານການຜະລິດໃຫ້ສູງຂຶ້ນກາຍເປັນສິນຄ້າ. ການຈັດຕັ້ງປະຕິບັດແມ່ນໄດ້ປະສານງານກັນກັບສູນຄົ້ນຄ້ວາກະສິກຳແລະປ່າໄມ້ພາກເໜືອ ໂດຍມີຜູ້ປະສານງານງານຂອງໂຄງການຊີດາປະຈຳເມືອງໂພນໄຊເປັນຜູ້ຮ່ວມລົງປະຕິບັດຕົວຈິງກັບຄອບຄົວ ເປົ້າໝາຍຂອງໂຄງການ.

ທາງດ້ານເຕັກນິກ ແລະ ວິທີການແມ່ນໄດ້ປະຕິບັດຄື: ໄດ້ກຳນົດເອົາເນື້ອທີ່ໄຮ່ປູກພືດກະສິກຳຂອງແຕ່ລະຄອບຄົວມີຂະໜາດຄອບຄົວລະ 1 ໄລ່ (1.600 ແມັດກາເຣ) ແລະມີຄວາມຄ້ອຍຊັນບໍ່ເກີນ 60%. ວິທີ ການ ປູກແມ່ນໄດ້ທົດລອງປູກ 2 ວິທີຄື: ວິທີຄູນດິນໃຫ້ເປັນຄັນຄູ ແລະ ບໍ່ເປັນຄັນຄູ. ວິທີຄູນດິນໃຫ້ເປັນຄັນຄູເພື່ອປູກນັ້ນແມ່ນໄດ້ແນະນຳໃຫ້ປະຊາຊົນສ້າງຄັນຄູກວ້າງ 1 ແມັດ ແລະ ຍາວ 40 ແມັດ ເວັ້ນວັກ 3 ແມັດເພື່ອປູກພືດກະສິກຳທີ່ປະຊາຊົນຕ້ອງການປູກ. ໄລຍະຫ່າງລະຫວ່າງຂຸມແມ່ນ 50x50 ຊັງຕີແມັດ ຕາມຄັນຄູທີ່ກຳນົດໄວ້. ໃນດອນໜຶ່ງຈະມີສອງແຖວລວມມີ 160 ຂຸມປູກ ແລະ 10 ດອນຕໍ່ສວນປູກ. ການຂຸດເປັນຄູປູກແມ່ນຂຸດເປັນແລວຕາມເສັ້ນລະດັບເພື່ອປ້ອງກັນການເຊາະເຈື່ອນຂອງດິນ. ບໍລິມາດການປູກແມ່ນໃຊ້ແນວພັນຈາກແຂວງໄຊຍະບູລີ 1 ກິໂລຈະແບ່ງປູກໄດ້ 20 ຂຸມປູກ ໝາຍວ່າຄອບ ຄົວໜຶ່ງໃຊ້ແນວພັນ 80 ກິໂລ. ສ່ວນຮູບແບບການທົດລອງແມ່ນໄດ້ປະຕິບັດ 3 ຮູບແບບຄື: ທົດລອງປູກປະສົມກັບສາລີ; ປູກປະສົມກັບໝາກເດືອຍ ແລະ ປູກປະສົມກັບໝາກງາ. ການເກັບກຳຂໍ້ມູນແມ່ນໄດ້ປະຕິບັດຄື: ຫຼັງຈາກປູກໄດ້ 1 ເດືອນ ໄດ້ລົງສຳຫຼວດເປີເຊັນການລອດຕາຍແລະເປີເຊັນການແຕກງອກ,ເກັບກຳຂໍ້ມູນໄລຍະ3ເດືອນ,6ເດືອນ.

ການເກັບກູ້ຜົນຜະລິດນັ້ນແມ່ນໃຫ້ປະຊາຊົນຂຸດແຕ່ລະໜານໂດຍການນຳພາຂອງພະນັກງານວິຊາການ ແລະ ຕິດຕາມເກັບກຳເອົາຂໍ້ມູນຜົນຜະລິດໂດຍການສັ່ງນ້ຳໜັກຂອງຂີງດຳແຕ່ລະໜານໄປພ້ອມ. ສົມທຽບຜົນຜະລິດຂອງຂີງດຳເຫັນວ່າຂີງດຳທີ່ປູກໃສ່ໜານຄັນຄູມີຜົນຜະລິດສູງກ່ວາວິທີທີ່ບໍ່ໄດ້ປູກໃສ່ໜານຄັນຄູ ແລະ ມີຄວາມແຕກແຕ່ງກັນພຽງແຕ່ 10-20%. ການເຮັດໜານແບບເປັນຄັນຄູໄດ້ໃຊ້ເວລາ ແລະ ແຮງງານຫຼາຍກ່ວາ.

ຜົນຜະລິດຂອງຂີງດຳທີ່ໄດ້ປູກແບບປະສົມປະສານກັບສາລີແມ່ນມີຜົນຜະລິດດີກ່ວາປູກປະສົມກັບໝາກເດືອຍແລະໝາກງາ. ແຕ່ວ່າລາຄາຂອງໝາກງາສູງກ່ວາລາຄາໝາກເດືອຍ ແລະ ສາລີ. ຜົນຜະລິດຂອງຂີງດຳສະເລ່ຍຕໍ່ຄອບຄົວແມ່ນໄດ້ປູກ 80 ກິໂລຕໍ່ຄອບຄົວ ແລະ ຜົນໄດ້ຮັບສະເລັ່ຍ131,2 ກິໂລຕໍ່ຄອບຄົວ. ສຳລັບຜົນຜະລິດຂອງຂີງດຳໄດ້ມອບໃຫ້ເຈົ້າຂອງສວນຈຳນວນ 75% ຂອງຜົນຜະລິດທີ່ໄດຮັບ ອີກ 15% ແມ່ນໄດ້ເອົາຄືນມາເພື່ອເປັນແນວພັນສຳລັບປູກໃໝ່. ສ່ວນຜົນຜະລິດຂອງພືດກະສິກຳອື່ນໆຂອງປະຊາຊົນທີ່ປູກໃນສວນດັ່ງກ່າວນັ້ນແມ່ນມອບໃຫ້ເຈົ້າຂອງສວນທັງໝົດ.

## I. ຄວາມເປັນມາ

ປະເທດລາວແມ່ນປະເທດໜຶ່ງທີ່ກຳລັງພັດທະນາ ເພື່ອຫຼຸດຜ່ອນຄວາມທຸກຈົນ ແລະ ສົ່ງເສີມໃຫ້ປະຊາຊົນມີຢູ່ມີກິນ, ມີຄວາມຈະເລີນກ້າວໜ້າ ວຽກງານກະສິກຳແມ່ນວຽກງານໜຶ່ງທີ່ລັດທະບານລາວໄດ້ເອົາໃຈໃສ່ ຕາມແຜນການພັດທະນາຂອງວຽກງານກະສິກຳ ແລະ ປ່າໄມ້ ເພື່ອສຶກສາຫຼຸດຜ່ອນຄວາມທຸກຈົນຂອງປະຊາຊົນຢູ່ໃນປະເທດລາວຂອງພວກເຮົາ ໂດຍສະເພາະແມ່ນວຽກງານການຄົ້ນຄ້ວາດ້ານປ່າໄມ້ ເພື່ອເປັນການສ້າງລາຍຮັບໃຫ້ປະຊາຊົນ. ເພື່ອຢຸດຕິການຖາງປ່າເຮັດໄຮ່ຂອງປະຊາຊົນ. ຍ້ອນວ່າປ່າໄມ້ໃນປະເທດເຮົາໄດ້ຫຼຸດໜ້ອຍຖອຍລົງໃນປ່າທຳມະຊາດດັ່ງກ່າວນັ້ນລວມມີ ເຄື່ອງປ່າຂອງດົງຫຼາຍຊະນິດທີ່ປະຊາຊົນນຳໃຊ້ ເປັນອາຫານ, ເປັນຢາສະໝຸນໄພ,ເປັນເຄື່ອງໃຊ້ຊອຍໃນຊີວິດປະຈຳວັນ ແລະທັງເປັນສິນຄ້າອີກດ້ວຍ. ຕາມການປະເມີນໃນແຕ່ລະເຂດທ້ອງຖິ່ນການນຳໃຊ້ເຄື່ອງປ່າຂອງດົງແຕກຕ່າງກັນຕາມ ແຕ່ລະຊະນິດພັນທີ່ແຈກຢາຍໃນທົ່ວປະເທດ ເຊັ່ນ: ຫວາຍ,ແຂມ, ໝາກແໜ່ງ,ຄົ້ງ,ຍານ,ດອກເຜີ້ງ,ໄມ້ປ່ອງ ແລະ ອື່ນໆ.

ການນຳໃຊ້ແມ່ນມີຫຼາຍຮູບແບບລວມທັງການຂຸດຄົ້ນແບບດັບສູນ. ການມອບດິນມອບປ່ານຳໃຊ້.ການຈັດສັນປ່າການນຳໃຊ້ໃນແຕ່ລະເຂດຍັງບໍ່ພຽງພໍກັບການນຳໃຊ້ເຄື່ອງປ່າຂອງດົງຂອງປະຊາຊົນດັ່ງນັ້ນວຽກງານການຄົ້ນຄ້ວາແມ່ນວຽກງານທີ່ສຳຄັນຕໍ່ການພັດທະນາເພື່ອແກ້ໄຂຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂື້ນ.

ດັ່ງນັ້ນການສຶກສາຄົ້ນຄ້ວາທົດລອງປູກບາງຊະນິດເຄື່ອງປ່າຂອງດົງແມ່ນການສຶກສາຄົ້ນຄ້ວາຫາບາງວິທີທາງທີ່ດີເພື່ອເປັນການຫຼຸດຜ່ອນການທຳລາຍຫຼືເປັນການຮັກສາ ແລະ ນຳໃຊ້ແນວພັນບາງຊະນິດພັນເຄື່ອງປ່າຂອງດົງໃຫ້ໄດ້ຮັບຜົນຜະລິດທີ່ມີຄຸນນະພາບ ແລະ ປະລິມານຫຼາຍ. ຂີງດຳ (Boesenbergia spp) ແມ່ນຜະລິດຕະພັນທີ່ເປັນທ່າແຮງໜຶ່ງທີ່ສາມາດສ້າງລາຍຮັບມາສູ່ປະຊາຊົນໂດຍກົງທັງນຳໃຊ້ເປັນຢາສະໝຸນໄພ, ໃຊ້ປຸງແຕ່ງລົດຊາດຂອງອາຫານໃນຊີວິດປະຈຳວັນ, ເປັນສິນຄ້າເພື່ອເປັນວັດຖຸດິບໃນການຜະລິດເປັນຢາບຳລຸງກຳລັງ ແລະ ນຳໃຊ້ຜະລິດເປັນເົ້າວາຍ (ໂຮງງານຢາເລກ 2)

## II. ຄຸນລັກສະນະຂອງຂີງດຳ

ຂີງດຳ:(*Boesenbergia spp*) ຢູ່ໃນຕະກຸນ Zingberaceae ເຊິ່ງມີຖິ່ນກຳເນີດຢູ່ໃນເອເຊຍເຂດຮ້ອນເຕີບໂຕໄດ້ໃນເຂດປ່າຊື້ນປຽກຊຸ່ມດິນຜຸພຸຍ ດິນປົນຊາຍ ເປັນພືດລົ້ມລຸກລຳຕົ້ນເປັນກາບ ກ້ານໃບໂອບຂື້ນ ສູງປະມານ 2025 ຊມ. ໃບມີຂະໜາດໃຫຍ່ ຮູບຮີ ປາຍສ້ວຍ ເສັ້ນກາງໃບຂະໜາດເຫັນຊັດເຈນທາງດ້ານຫຼັງ ດອກອອກຕາມຊອກ ກ້ານໃບເປັນຊໍ່ກີບຕິດກັນ ມີສີຂາວ ຮາກແມ່ນສ່ວນທີ່ສຳຄັນ ຂະຫຍາຍໃຫຍ່ຂື້ນກາຍເປັນຫົວ, ໃນຫົວເປັນສີມ່ວງດຳ, ມີກິ່ນທີ່ມີສານທີ່ນຳໄປສະກັດເປັນຢາສະໝຸນໄພ.

ການຂະຫຍາຍພັນດ້ວຍຫົວ, ໂດຍການນຳເອົາຫົວມາອານາໄມແກະສ່ວນທີ່ເປັນຫົວເກົ່າອອກ, ເອົາຫົວໃໝ່ມາຕັດ ສຳປະມານປາຍນິ້ວມືຕາມບ່ອນທີ່ມີຕານຳໄປປູກ ໃນຊ່ວງກ່ອນລະດູຝົນ (ເດືອນ 4 - 5) ແລະເກັບກູ້ຫຼັງຈາກປູກໄດ້ 7- 8 ເດືອນ (ເດືອນ 11-12) (ສະໝຸນໄພໃນຄົວຣສ.ດຣ ວັນດີກິດສະພັນ 2541,ພືດສະໝຸນໄພ ນິດສິຖິ ເຮືອງລັງສີ 2543.ປູກສະໝຸນໄພໃຊ້ເອງພະຍອຍ ຈອມພີທັກ 2537).

ປະຈຸບັນຂີງດຳນິຍົມກັນປູກຫຼາຍ ເຂດວັງວຽງ ແຂວງວຽງຈັນ, ແຂວງໄຊຍະບູລີ, ແຂວງອຸດົມໄຊ,ແຂວງຫຼວງພະບາງ, ແຂວງບໍລິຄຳໄຊ ແລະ ແຂວງນະຄອນຫຼວງວຽງຈັນ (ການລາຍງານການຕະຫຼາດ ຄປດ 2004).

## III. ຈຸດປະສົງ

- ເພື່ອຍົກສະມັດຕະພາບຮັບປະກັນການມີຢູ່ມີກິນ ຫຼຸດຜ່ອນຄວາມທຸກຈົນ ແລະ ການຢຸດຕິການຖາງປ່າເຮັດໄຮ່ ໃຫ້ປະຊາຊົນມີສ່ວນຮ່ວມການຄົ້ນຄ້ວາທົດລອງ.

- ເພື່ອຕອບສະໜອງນະໂຍບາຍຂອງພັກລັດ ເຮັດໃຫ້ປະເທດຊາດມີການພັດທະນາຢ່າງຮອບດ້ານ.
- ເພື່ອເຮັດໃຫ້ປະຊາຊົນມີລາຍຮັບເສີມ ເພື່ອຊຸກຍູ້ວຽກງານການຜະລິດໃຫ້ສູງຂຶ້ນເປັນສິນຄ້າ.

## IV. ວິທີຈັດຕັ້ງປະຕິບັດ

### 1. ການຈັດຕັ້ງປະຕິບັດ

ທີມງານໄດ້ຮ່ວມງານກັບປະສານງານທ້ອງຖິ່ນ ປ່າໄມ້ເມືອງ ລົງສຳພາດປະຊາຊົນ ແລະ ສຳຫຼວດເນື້ອທີ່ເບື້ອງຕົ້ນໄດ້ຄັດເລືອກເອົາຄອບຄົວທີ່ເໝາະສົມເຂົ້າຮ່ວມ. ຜູ້ຮັບຜິດຊອບກິດຈະກຳໄດ້ສ້າງແຜນການໂດຍລະອຽດ ເພື່ອຈັດຕັ້ງປະຕິບັດໂດຍການຊີ້ນຳ ແລະ ນຳພາ ຂອງສູນຄົ້ນຄ້ວາປ່າໄມ້, ໜ່ວຍງານເຄື່ອງປ່າຂອງດົງ ໄດ້ມອບໃຫ້ວິຊາການຮ່ວມກັບທາງປະສານງານເມືອງເພື່ອຈັດຕັ້ງປະຕິບັດ.

### 2. ສະຖານທີ່

ບ້ານທ່າໂພ ແລະ ບ້ານຫ້ວຍມະຫາ ເມືອງໂພນໄຊ ແຂວງຫຼວງພະບາງເຊິ່ງເປັນເມືອງໜຶ່ງທີ່ຕັ້ງຢູ່ກາງຮ່ອມພູ ແລະ ພື້ນທີ່ຫຼາຍກ່ວາ80% ແມ່ນພູ. ມີເນື້ອທີ່ທັງໝົດປະມານ 246.104ເຮັກຕາ, ທາງທິດເໜືອຕິດກັບເມືອງປາກເຊືອງ(ຫຼວງພະບາງ) ແລະເມືອງວຽງຄຳ(ແຂວງຫົວພັນ) , ທາງທິດຕາເວັນອອກຕິດກັບເມືອງພູກູດ(ຊຽງຂວາ)ທາງທິດຕາເວັນຕົກແມ່ນຕິດກັບຕົວເມືອງຫຼວງພະບາງ ແລະ ທາງທິດໃຕ້ຕິດກັບເມືອງຊຽງເງິນ(ຫຼວງພະບາງ).ໃນນັ້ນລວມມີ 56 ໝູ່ບ້ານ, ຈຳນວນປະຊາກອນທັງໝົດມີ 24.237 ຄົນ. ສ່ວນໃຫຍ່ ແມ່ນຊົນເຜົ່າຂະມຸ 63, 5%, ຊົນເຜົ່າມົ້ງ 24,5% ແລະ ເຜົ່າອື່ນໆ 12.0% ອຸນນະພູມສະເລ່ຍ 20-40ອົງສາເຊ, ປະລິມານນ້ຳຝົນ ແມ່ນ 1.700- 1.800 ມມ/ປີ, ລະດັບສູງໜ້ານ້ຳທະເລ ປະມານ 556 ແມັດ. (ຂໍ້ມູນ ບົດລາຍງານ ເມືອງໂພນໄຊ).

ໃນນີ້ລວມມີ 5 ໝູ່ບ້ານເຂດຈອມພູ ແຕ່ສາມາດຄັດເລືອກໄດ 2 ໝູ່ບ້ານຄື: ບ້ານທ່າໂພ ມີ 3 ຄອບຄົວຄື: ຄອບຄົວ ຊຽງພັດ, ທອງດຳ, ແລະ ນາງ ດວງວິໄລ. ບ້ານຫ້ວຍມະຫາມີ 2 ຄອບຄົວ ຄື: ຄອບຄົວ ດາໄກ, ແລະ ຄອບຄົວຈົ່ງຖາ+ໃຈຊົວວາ.

### 3. ສະພາບເນື້ອທີ່

-ເນື້ອທີ່ ຂອງປະຊາຊົນແມ່ນເປັນເນື້ອທີ່ໄຮ່ປູກພືດກະສິກຳ ຂະໜາດ 1 ໄລ່.
- ສະພາບດິນເປັນດິນປູກຝັງຄວາມຄອຍຊັນບໍ່ເກີນ 60%
- ເປັນເນື້ອທີ່ປະຊາຊົນທຳການຜະລິດທຸກໆປີ ໂດຍສະເພາະແມ່ນພືດກະສິກຳເຊັ່ນ: ໝາກງາ, ສາລີ,ໝາກເດືອຍ,ຖົ່ວດິນ ແລະ ເຂົ້າ.

### 4. ເຕັກນິກ ແລະ ວິທີການ

- ເນື້ອທີ່ແຕ່ລະຄອບຄົວແມ່ນ(40x40 ມ) =1.600 ແມັດກາເຣ
- ການປູກແມ່ນໄດ້ແນະນຳໃຫ້ປະຊາຊົນຂຸດເປັນຮ່ອງ ຫຼື ຄູ ກ້ວງ 1 ມ, ຍາວ 40 ມ ຮອດຂອບເວັ້ນວັກ3 ແມັດ. ເພື່ອປູກພືດກະສິກຳ ສັບຫວ່າງອີກ 1 ມ. ແຕ່ບໍ່ໄດ້ຂຸດຄືດອນທີ່ 1( ສັງເກດຕາມແຜ່ນວາດການວາງດອນທົດລອງ)
- ການປູກແມ່ນມີໄລຍະຫ່າງລະຫວ່າງຂຸມແມ່ນ 50x50 ຊມ. ຕາມຄູ ຫຼື ຮ່ອງທີ່ກຳນົດໄວ້.
- ໃນດອນໜຶ່ງຈະມີ 2 ແຖວ ລວມມີ 160 ຂຸມປູກ ລວມມີ 10 ດອນ/ສວນປູກ.
- ການຂຸດເປັນຄູປູກແມ່ນ ຂຸດເປັນແລວຕັດລວງຄ້ອຍຕັດເສັ້ນທາງການໄຫຼຂອງນ້ຳເພື່ອຕ້ານກັນເຈື່ອນ.

- ບໍລິມາດການປູກແມ່ນໃຊ້ແນວພັນຈາກແຂວງໄຊຍະບູລີ 1 ກິໂລແມ່ນໄດ້ແບ່ງປູກ 20 ຂຸມປູກ ໝາຍວ່າຄອບຄົວໜຶ່ງໃຊ້ແນວພັນ 80 ກິໂລ. ໃນ 5 ຄອບຄົວ ມີ 400 ກິໂລ.
- ໄດ້ແບ່ງອອກເປັນ 3 ຮູບແບບການທົດລອງຄື:ປູກປະສົມກັບສາລີ, ໝາກເດືອຍ,ແລະ ໝາກງາ.

| | | |
|---|---|---|
| ປູກພືດກະສິກຳປະສົມ | | |
| | A | ປູກຂີງດຳໃສ່ໝານ(ຄັນຄູ) |
| ປູກພືດກະສິກຳປະສົມ | | |
| | B | ປູກຂີງດຳບໍ່ໃສ່ໝານ |
| ປູກພືດກະສິກຳປະສົມ | | |
| | A | ປູກຂີງດຳໃສ່ໝານ(ຄັນຄູ) |
| ປູກພືດກະສິກຳປະສົມ | | |
| | B | ປູກຂີງດຳບໍ່ໃສ່ໝານ |
| ປູກພືດກະສິກຳປະສົມ | | |
| | A | ປູກຂີງດຳໃສ່ໝານ(ຄັນຄູ) |
| ປູກພືດກະສິກຳປະສົມ | | |
| | B | ປູກຂີງດຳບໍ່ໃສ່ໝານ |
| ປູກພືດກະສິກຳປະສົມ | | |
| | A | ປູກຂີງດຳໃສ່ໝານ(ຄັນຄູ) |
| ປູກພືດກະສິກຳປະສົມ | | |
| | B | ປູກຂີງດຳບໍ່ໃສ່ໝານ |
| ປູກພືດກະສິກຳປະສົມ | | |

ຮູບ1: ຮູບແບບການປູກຂີງດຳສອງວິທີປະສົມປະສານກັບພືດກະສິກຳ

## V. ຈຳນວນຜູ້ທີ່ເຂົ້າຮ່ວມ

1. ສູນຄົ້ນຄ້ວາປ່າໄມ້ຊີ້ນຳລວມ ແນວທາງການຈັດຕັ້ງປະຕິບັດ.
2. ທ່ານ ຄຳພອນ ແສງດາລາ ຫົວໜ້າໜ່ວຍງານເຄື່ອງປ່າຂອງດົງຊີ້ນຳວິທີການຊຽນບົດວິທີການຈັດຕັ້ງປະຕິບັດ.
3. ທ້າວ ສິງກອນ ໄຊຍະລາດຮັບຜິດຊອບກິດຈະກຳຜູ້ຈັດຕັ້ງປະຕິບັດຊຽນບົດ ສ້າງແຜນສະຫຼຸລາຍງານ.
4. ນາງໄພວອນ ພອນພະນົມ ວິຊາການ
5. ທ້າວ ບຸນຈັນ ຫົວໜ້າຫ້ອງການປະສານງານເມືອງໂພນໄຊ
6. ທ້າວ ຄຳຫຼ້າ ທອນລັດສະໝີ ຜູ້ຊ່ວຍພາກສະໜາມ ເມືອງໂພນໄຊ.

## VI. ການເກັບຂໍ້ມູນ

ຫຼັງຈາກທາງທີມງານໄດ້ລົງມືຈັດຕັ້ງປະຕິບັດ ການປູກໄດ້ 1 ເດືອນ ການສຳຫຼວດເປີເຊັນການເກີດ(ລອດຕາຍ) ໂດຍການຍ່າງສຳຫຼວດເບິ່ງການແຕກໜໍ່ອ່ອນແຕ່ລະຂຸມປູກເຫັນວ່າເກີດ 100 %

- ການເກັບຂໍ້ມູນໄລຍະ 3 ເດືອນ ແມ່ນບໍ່ໄດ້ເອົາ( ຍ້ອນວ່າເປັນຫົວໃນດິນ)
- ການເກັບກູ້ແມ່ນຫຼັງຈາກປູກໄດ 6 ເດືອນ (16/6/05-18/12/05) ວິທີການເກັບກູ້ແມ່ນໄດ້ໃຊ້ສຽມຂຸມເອົາຫົວຂອງຂີງດຳຂຶ້ນມາອານາໄມ ແລະ ສ້ອມຮາກອອກ.
- ຫຼັງຈາກຂຸດແລ້ວ ແຕ່ລະໜານ ແມ່ນໄດ້ນຳໃສ້ເປົາປຸຍ ພອ້ມທັງຊັ່ງນ້ຳໜັກຂອງແຕ່ລະໜານ.

## VII ຜົນໄດ້ຮັບ

ຕາຕະລາງ1: ການສະເລ່ຍນ້ຳໜັກລວມຂີງດຳຂອງແຕ່ລະຄອບຄົວ (ຫົວໜ່ວຍKg)

| ລ/ດ | ຊື່ຄອບຄົວ | ແນວພັນ | ຂຸດຮ່ອງ | ບໍ່ຂຸດຮ່ອງ | ລວມ |
|---|---|---|---|---|---|
| 1 | ນ. ດວງວິໄລ | 80 | 64 | 55 | 119 |
| 2 | ທ. ຊຽງພັດ | 80 | 62 | 59 | 121 |
| 3 | ທ. ທອງດຳ | 80 | 69 | 55 | 124 |
| 4 | ທ. ດາໄກ | 80 | 72 | 62 | 134 |
| 5 | ທ. ຈິງຖາ+ ໃຈຊືວວາ | 80 | 83 | 75 | 158 |




ຮູບ2: ຮູບສະແດງຜົນຜະລິດຂອງຂີງດຳແຕ່ລະຄອບຄົວ

ຕາຕະລາງ2: ການຄິດໄລ່ຄ່າແຮງງານ (ຄິດເປັນເງິນ/ກີບ)

| ລ/ດ | ລາຍຊື່ ຄອບຄົວ | ແຮງງານ | ຄ່າແຮງງານ(ກີບ/ແຮງງານ) | ລວມເປັນເງິນກີບ |
|---|---|---|---|---|
| 1 | ນ. ດວງວິໄລ | 13 | 10,000/1ຮຽ | 130,000 |
| 2 | ທ. ຊຽງພັດ | 14 | 10,000/1ຮຽ | 140,000 |
| 3 | ທ. ທອງດຳ | 10 | 10,000/1ຮຽ | 100,000 |
| 4 | ທ. ດາໄກ | 10 | 10,000/1ຮຽ | 100,000 |
| 5 | ທ. ຈິງທາ+ໄຈຊິວວາ | 8 | 10,000/1ຮຽ | 80,000 |

ຕາຕະລາງ3: ລາຍຈ່າຍແລະລາຍຮັບແຕ່ລະຄອບຄົວ

| ລ/ດ | ລາຍຊື່ ຄອບຄົວ | ລາຍຈ່າຍ(ກີບ) | ລາຍຮັບ(ກີບ) |
|---|---|---|---|
| 1 | ນ. ດວງວິໄລ | 800,000 | 1,200,000 |
| 2 | ທ. ຊຽງພັດ | 800,000 | 1,250,000 |
| 3 | ທ. ທອງດຳ | 800,000 | 1,300,000 |
| 4 | ທ. ດາໄກ | 800,000 | 1,400,000 |
| 5 | ທ. ຈິງທາ+ໄຈຊິວວາ | 800,000 | 1,600,000 |




ຮູບ3: ຮູບສະແດງການສົມທຽບລາຍຈ່າຍ ແລະ ລາຍຮັບແຕ່ລະຄອບຄົວ.

## VIII. ການວິເຄາະ

ໃນການສຶກສາຄົ້ນຄ້ວາທົດລອງກິດຈະກຳນີ້ເຫັນວ່າດ້ານການປະສານງານໃນການຕິດຕໍ່ພົວພັນຜ່ານຫຼາຍຂັ້ນຕອນໃນການເຮັດວຽກຍັງມີບາງວຽກງານທີ່ຫຍຸ້ງຍາກເຊັ່ນ:ພາຫະນະຮັບໃຊ້,ການຕິດຕໍ່ສື່ສານລະຫວ່າງສູນກາງແລະທ້ອງຖິ່ນການພົວພັນວຽກງານກັບພາກສ່ວນທີ່ກ່ຽວຂ້ອງ(ສູນຫ້ວຍໂຄດ) ພາກສ່ວນປະຊາຊົນການຢາກເຂົ້າຮ່ວມຂອງປະຊາຊົນມີສູງແຕ່ວ່າຂາດແຮງງານຫຼືຄວາມຮັບຜິດຊອບ. ໃນພາກສ່ວນທີ່ຕົນຮັບຜິດຊອບ ເນື້ອທີ່ເຮັດການທົດລອງມີຈຳກັດ, ການທົດລອງກັບປະຊາຊົນແມ່ນມີທາງເລືອກໜ່ອຍເຊັ່ນ:ປະຊາຊົນຕ້ອງການແຕ່ເນື້ອທີ່ບໍ່ຖືກຕາມມາດຖານທີ່ວາງໄວ້ຫຼືມີເນື້ອທີ່ແຕ່ຈຳເປັນຕ້ອງໄດ້ປັ່ງນແປງບາງເຕັກນິກທີ່ວາງໄວ້ເພື່ອໃຫ້ຖືກກັບຈິດໃຈຂອງປະຊາຊົນ.

ດ້ານແນວພັນແມ່ນໄດ້ມາຈາກແຂວງໄຊຍະບູລີ ຍ້ອນວ່າແນວພັນຢູ່ເຂດນັ້ນແມ່ນຫຼາຍ ແລະ ເປັນການສົ່ງເສີມຜູ້ຜະລິດໂດຍກົງ ແຕ່ມີຫຼາຍແຫຼ່ງທີ່ແຕກຕ່າງກັນເຊັ່ນ: ກຳແພງນະຄອນ,ວັງວຽງ (ວຽງຈັນ)ເຂດຫຼັກຊາວ (ບໍລິຄຳໄຊ) ອຸດົມໄຊ ແລະ ຫຼວງພະບາງແຕ່ເຮົາບໍ່ສາມາເວົ້າໄດ້ວ່າອັນໃດດີກ່ວາກັນເຊິ່ງແມ່ນຜ່ານທາງພໍ້ຄ້າ.

ດ້ານວິທີການມີ 2 ວິທີ ແລະ 3 ຮູບແບບ:

ວິທີ 1: ແມ່ນໂດຍການຂຸດເປັນຄູ ກ້ວາງ 1 ມ, ຍາວ 40 ມ (ຕາມແຜນວາດການວາງດອນ) ເຫັນວ່າຜົນຜະລິດຂອງຂີງດຳຈະເລີນເຕີບໂຕໄດ້ດີແຕ່ວ່າເປັນການໃຊແຮງງານຫຼາຍໃນການຂຸດ.

ວິທີ 2 ແມ່ນກ້ວາງ 1 ມ, ຍາວ 40 ມ (ຕາມແຜນວາດການວາງດອນ) ແຕ່ບໍ່ໄດ້ຂຸດຄືກັນກັບວິທີ 1 ເຫັນວ່າຜົນຜະລິດໜ່ອຍກ່ວາເລັກນ້ອຍ ຍ້ອນຫົວນ້ອຍກ່ວາ ແຕ່ວ່າບໍ່ໄດ້ໃຊ້ແຮງງານຂຸດ.

ໃນນີ້ໄດ້ປູກເປັນ 3 ຮູບແບບ. ໃນ 5 ຄອບຄົວແມ່ນປູກ ຂີງດຳປະສົມປະສານກັບໝາກເດືອຍ,ໝາກງາ ແລະ ສາລີ.

1. ປູກຂີງດຳປະສົມກັບໝາກເດືອຍເຫັນວ່າຜົນຜະລິດຂອງຂີງດຳມີນ້ຳໜັກໜ່ອຍກ່ວາຖ້າທຽບໃສແບບທີ 2 ແລະທີ 3 . ຍ້ອນວ່າຕົ້ນໝາກເດືອຍຂະຫຍາຍຕົວໄວເຮັດໃຫ້ປິດບັງແສງສະຫວ່າງ ແລະ ທາດອາຫານບໍ່ພຽງພໍ.
2. ປູກຂີງດຳປະສົມກັບໝາກງາ ເຫັນວ່າຜົນຜະລິດຂອງຂີງດຳຂະຫຍາຍໄດ້ດີກ່ວາແບບທີ 1 ແຕ່ຜົນຜະລິດຂອງໝາກງາໄດ້ດີເຫັນໄດ້ມີຕົ້ນໃຫຍ່ມີງ່າຫຼາຍກ່ວາ ຖ້າທຽບໃສ່ກັບຕົ້ນທີ່ຢູ່ກາງ
3. ປູກຂີງດຳປະສົມກັບສສລີເຫັນວ່າຜົນຜະລິດອງຂີງດຳຂະຫຍາຍໄດ້ດີກວ່າແບບທີ 1 ແລະ ທີ 2 ຕົ້ນສາລີສູງ ແລະ ເປີດແສງພຽງພໍ ແລະ ຕົ້ນສາລີກໍບໍ່ຂະຫຍາຍຕົວຫຼາຍ. ແລະ ຜົນຜະລິດຂອງສາລີກໍໄດ້ດີ.

.

## IX. ການສົນທະນາ

ຜ່ານການປະຕິດບັດກິດຈະກຳດັ່ງກ່າວເຫັນວ່າຜົນຜະລິດຂອງຂີງດຳ ແລະ ພືດກະສິກຳ ມີທ່າອ່ຽງດີຂື້ນ. ຍ້ອນວ່າການປູກໂດຍການຂຸດດິນເປັນຄູເຮັດໃຫ້ເປັນການພູນດິນໃຫ້ກັບຂີງດຳ ແລະ ພືດອື່ນໆແຕ່ຕ້ອງໃຊ້ແຮງງານໃນການຂຸດ ໃນກໍລະນີປູກໂດຍບໍ່ຂຸດຜົນໄດ້ຮັບແມ່ນບໍ່ແຕກຕ່າງກັນຫຼາຍ ແລະ ບໍ່ໄດ້ໃຊ້ແຮງງານຫຼາຍ. ການປູກຂີງດຳໃນ 1 ໄລ່ (1.600ແມັດກາເຣ) ແມ່ນເຮົາໃຊ້ ແນວພັນ 80 ກິໂລ/400 ແມັດກາເຣ ຜົນຜະລິດເພີ່ມຂື້ນ 70 % ຂອງແນວພັນ, ທີ່ໍ້ອແມ່ນປູກພືດກະສິກຳເຊັ່ນ: ການປູກປະສົມກັບສາລີ, ຜົນຜະລິດຂີງດຳໄດ້ດີ ຍ້ອນຕົ້ນສາລີບໍ່ຂະຫຍາຍຕົວຫຼາຍ ຜົນຜະລິດຂອງຂີງດຳໃນການປູກປະສົມກັບໝາກເດືອຍແມ່ນໜ້ອຍກ່ວາ ຍ້ອນວ່າຕົ້ນໝາກເດືອຍມີການຂະຫຍາຍຕົວຫຼາຍ.ໃນນີ້ຖ້າສມົທຽບລາ ຄາຂອງຜົນຜະລິດພືດກະສິກຳເຫັນວ່າລາຄາຂອງໝາກເດືອຍ ແມ່ນສູງກ່ວາລາຄາຂອງໝາກງາ ແລະ ສາລີ.

## X. ສະຫຼຸບ

ຜ່ານການປະຕິບັດການທົດລອງປູກຊີງດຳ ການຂຸດເປັນຄູເຫັນວ່າຜົນຜະລິດບໍ່ແຕກຕ່າງກັນຫຼາຍກັບບໍ່ຂຸດແຕ່ການຂຸດເປັນການໃຊ້ແຮງງານຫຼາຍກ່ວາ ແຕ່ໃນການປູກປະສົມປະສານກັບພືດກະສິກຳຄື: ສາລີ,ໝາກເດືອຍ,ໝາກງາ ໃນການສົມທຽບເຫັນວ່າ ຜົນຜະລິດຂອງຊີງດຳໃນສາລີສູງກ່ວາໝູ່ ແລະ ຖ້າທຽບກັບຜົນຜະລິດໃນແຕ່ລະສວນແມ່ນໃນສວນສາລີໄດ້ດີ ແຕ່ເມືອສົມທຽບລາຄາຂອງຜົນຜະລິດ ເຫັນວ່າໝາກເດືອຍໄດ້ດີ.

ລະຫວ່າງປະສານງານທ້ອງຖິ່ນ ກັບສູນກາງ ຈາກການສົມທຽບລະຫວ່າງ ນ້ຳໜັກຜົນຜະລິດຂອງຊີງດຳແຕ່ລະວິທີການໃນແຕ່ລະສວນ –ແລະ ຜົນຜະລິດຂອງພືດກະສິກຳທີ່ໄດ້ຮັບ.ນອກຈາກການປູກພືດກະສິກຳແລ້ວຍັງໄດ້ຜົນຜະລິດຂອງຊີງດຳອີກ.ເຊິ່ງສັງເກດເຫັນຜົນດີດັ່ງນີ້.

1. ຜົນຜະລິດຂອງຊີງດຳເພີ່ມຂື້ນ 70% ຂອງແນວພັນ.
2. ການສົມທຽບລະຫວ່າງການຂຸດຮ່ອງ ແລະ ບໍ່ຂຸດຮ່ອງເຫັນວ່າ ມີຄວາມແຕກຕ່າງກັນເລັກນ້ອຍ ແມ່ນ 10-20%
3. ຜົນຜະລິດຂອງພືດກະສິກຳເຊັ່ນ: ໝາກງາ, ໝາກເດືອຍ ແລະ ສາລີ ດີກ່ວາຖ້າທຽບໃສ່ບໍ່ປູກປະສົມ.
4. ຜົນຜະລິດຂອງຊີງດຳໃນສວນສາລີໄດ້ດີກ່ວາໃນສວນໝາກເດືອຍ ແລະ ໝາກງາ
5. ໃນນີ້ລາຄາຂອງໝາກງາສູງກວ່າລາຄາໝາກເດືອຍ ແລະ ສາລີ.

## XI. ຂໍ້ສະເໜີແນະ

ການປູກຊີງດຳ ແບບປະສົມປະສານກັບພືດກະສິກຳ ແມ່ນເປັນຜົນດີໃຫ້ແກ່ຊາວກະສິກອນ ຍ້ອນວ່າການປູກປະສົມປະສານນີ້ເຮັດໃຫ້ໄດ້ຮັບຜົນຜະລິດຂອງພືດກະສິກຳ ແລະ ຊີງດຳ; ຊີງດຳໄດ້ຮັບຜົນດີໃນການປູກກ້ອງຮົ່ມສາລີ ແລະ ສາລີກໍ່ໃຫ້ຜົນຜະລິດສູງ. ສັງເກດໄດ້ຝັກໃຫ່ຍ ໄດ້ນ້ຳໜັກດີ ເຊິ່ງສາມາດປູກຊີງດຳໄດ້ໂດຍການຂຸດ ຫຼື ບໍ່ຂຸດຮ່ອງກໍໄດ້. ຍ້ອນວ່າຜົນຂອງການທົດລອງບໍ່ແຕກຕ່າງກັນຫຼາຍ ແລະ ຍັງເປັນການໃແຮ່ງງານໜ່ອຍກວ່າ ແຕ່ຕ້ອງຂຸດຂຸມປູກໃຫ້ກ້ວາງນອກນີ້ການປູກແບບປະສົມນີ້ຍັງເປັການປັບປຸງດິນໂດຍການປູກພືດແບບສະລັບກັນ ເຮັດໃຫ້ພືດໄດ້ຮັບອາຫານຢ່າງພຽງພໍພືດເຕີບໂຕໄດ້ດີເຮັດໃຫ້ດິນ ແລະ ພືດທີ່ຢູ່ກ່ອງໄດ້ຮັບແສງສະຫວ່າງພຽງພໍ ແລະ ການປູກໝາກງາໂດຍສັງເກດເຫັນວ່າຕົ້ນທີ່ຢູ່ແຄມຈະໃຫຍ່, ສູງ, ມີງ່າ ແລະ ໝາກຫຼາຍກ່ວາຕົ້ນທີ່ຢູ່ກາງຈະເຫຼືອງ, ບໍ່ມີງ່າ ແລະ ໝາກກໍນ້ອຍ.